ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 08 /ຈຂອປ
ອັດຕະປື, ວັນທີ 09 ເມສາ 2024

# ຄຳສັ່ງ
## ວ່າດ້ວຍການຫ້າມຈັບຈອງ ແລະ ບຸກລຸກທີ່ດິນໂດຍບໍ່ໄດ້ຮັບການອະນຸຍາດ

**ເຖິງ:** ບັນດາທ່ານ ພະນັກງານ, ທະຫານ, ຕຳຫຼວດ, ນັກທຸລະກິດ, ບຸກຄົນ, ນິຕິບຸກຄົນ, ຕະຫຼອດຮອດພໍ່ແມ່ປະຊາຊົນ ໃນຂອບເຂດທົ່ວແຂວງອັດຕະປື.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ(ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ(ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019.
- ອີງຕາມ ມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການເພີ່ມທະວີວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນໃນໄລຍະໃໝ່ ສະບັບເລກທີ 026/ຄບສພ, ລົງວັນທີ 03/08/2017.

## ເຈົ້າແຂວງ ອອກຄຳສັ່ງ:

1. ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການປະສານສົມທົບກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 5 ຕົວເມືອງ, ບັນດາອົງການຈັດຕັ້ງຂັ້ນເມືອງ, ບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຜັນຂະຫຍາຍ, ເຜີຍແຜ່ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ມະຕິຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ026/ຄບສພ,ລົງວັນທີ 03 ສິງຫາ 2017 ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ນັກທຸລະກິດ, ບຸກຄົນ, ນິຕິບຸກຄົນ, ຕະຫຼອດຮອດພໍ່-ແມ່ປະຊາຊົນ ພາຍໃນເມືອງທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.
2. **ຫ້າມຈັບຈອງທີ່ດິນ ຫຼື ບຸກລຸກທີ່ດິນ**: ການຈັບຈອງດິນທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ແມ່ນມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການປະສານສົມທົບກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 5 ຕົວເມືອງ, ບ້ານ ແລະ ພະແນກການກ່ຽວຂ້ອງ ເພື່ອດຳເນີນການກວດກາ ແລະ ລົບລ້າງເອກະສານສິດທີ່ກ່ຽວກັບທີ່ດິນ ທີ່ບໍ່ສອດຄ່ອງກັບກົດໝາຍ; ໃນກໍລະນີຫາກພົບເຫັນການກໍ່ຄວາມເສຍຫາຍ ຕ້ອງດຳເນີນຄະດີຕາມຂະບວນການຍຸຕິທຳຢ່າງເຂັ້ມງວດ ແລະ ເດັດຂາດຕໍ່ບັນຫາລຸ່ມນີ້:

2.1 ການຈັບຈອງດິນເຂດປ່າສະຫງວນ, ປ່າດົງດິບ, ປ່າຍອດນ້ຳ, ທີ່ດິນບໍລິເວນບໍ່ແຮ່, ເຂດວັດທະນະທຳບູຮານສະຖານ, ເຂດທ່ອງທ່ຽວທຳມະຊາດ, ເຂດປະຫັວດສາດ ແລະ ເຂດສະຫງວນຂອງລັດ;

2.2 ບຸກລຸກ ແລະ ຄອບຄອງດິນສຳນັກງານອົງການຂອງລັດ, ການຈັບຈອງໂດຍບໍ່ໄດ້ຮັບອະນຸຍາດ ດ້ວຍຮູບການຂຸດດິນເປັນຮ່ອງ, ປູກຕົ້ນໄມ້ໃສ່, ປັກຕາແລວ, ລ້ອມຮົ້ວໄວ້, ປຸກເຮືອນ ຫຼື ຮ້ານໃສ່ ເພື່ອໝາຍບ່ອນ, ໝາຍເຂດແດນ ຫຼື ແບ່ງເຂດແດນຕາມສາຍນ້ຳ ແລະ ຫ້ວຍນ້ຳຕາມທຳມະຊາດ ແລ້ວໃຊ້ສິດຫວງຫ້າມ, ສະຫງວນເປັນຂອງຕົນເອງ ຫຼື ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງບຸກລຸກເອົາດິນເຂດສະຫງວນຂອງລັດ, ດິນທີ່ລັດກຳລັງດຳເນີນການຈັດສັນ ແລະ ທີ່ດິນລັດຍັງບໍ່ທັນໄດ້ຈັດສັນ ຫຼື ອະນຸຍາດໃຫ້;

2.3 ຫ້າມຂະແໜງການຄຸ້ມຄອງທີ່ດິນຂັ້ນແຂວງ, ເມືອງ, ອຳນາດການປົກຄອງທຸກຂັ້ນ ແຕ່ແຂວງລົງຮອດຂັ້ນບ້ານ ອອກອະນຸຍາດສິດນຳໃຊ້ທີ່ດິນໃຫ້ແກ່ບຸກຄົນ ຫຼື ການຈັດຕັ້ງ ກ່ອນ ຫຼື ຫຼັງປະກາດໃຊ້ກົດໝາຍທີ່ດິນ ປະກອບມີປະເພດທີ່ດິນດັ່ງນີ້: ທີ່ດິນປ່າປ້ອງກັນ, ປ່າສະຫງວນ, ປ່າຄົງຄືບ, ດິນບໍລິເວນອ່າງເກັບນ້ຳທຳມະຊາດ, ຍອດຫ້ວຍ, ຍອດແມ່ນ້ຳ, ລຳເຊ, ທີ່ດິນແຄມໜອງ, ແຄມບຶງທຳມະຊາດ ແລະ ທີ່ດິນທີ່ລັດສະຫງວນໄວ້, ທີ່ດິນເຂດສະຫງວນຫວງຫ້າມຂອງລັດ ແລະ ລວມໝູ່, ທີ່ດິນບໍລິເວນບໍ່ແຮ່, ເຂດວັດທະນະທຳ ແລະ ບູຮານສະຖານ, ເຂດທ່ອງທ່ຽວທຳມະຊາດ, ເຂດປະຫັວດສາດ ແລະ ເຂດສະຫງວນຂອງລັດ, ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ທີ່ດິນຄົມມະນາຄົມສະຫງວນໄວ້ສ້າງທາງ ຫຼື ສ້າງສິ່ງສາທາລະນະປະໂຫຍດອື່ນໆ, ທີ່ດິນສະຫງວນໄວ້ສ້າງສາຍສົ່ງຫຼືແລວສາຍໄຟຟ້າ, ທີ່ດິນທີ່ມີລະບຽບກົດໝາຍຫວງຫ້າມແລ້ວ.

3. ລັດບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງໃດໜຶ່ງຈັບຈ່ອງ ຫຼື ບຸກລຸກທີ່ດິນ ( ລວມທັງຊຸກເຊື່ອງ, ເຊື່ອງອຳຕອນດິນ, ນຳໃຊ້ດິນບໍ່ມີເອກະສານຄອບຄອງ), ການຈັບຈ່ອງ ແລະ ບຸກລຸກທີ່ດິນທີ່ບໍ່ໄດ້ຮັບການອະນຸຍາດຢ່າງຖືກຕ້ອງ ຈະຖືກລົງໂທດຕາມກົດໝາຍ ແລະ ຈະຖືກຮິບຄືນ, ໃນກໍລະນີມີສິ່ງປຸກສ້າງ ຫຼື ດຳເນີນກິດຈະການໃດໜຶ່ງຢູ່ໃນຕອນດິນດັ່ງກ່າວ ຕ້ອງຮື້ຖອນສິ່ງປຸກສ້າງ ແລະ ຢຸດເຊົາການດຳເນີນກິດຈະການ ໂດຍລັດຈະບໍ່ທົດແທນຄືນແຕ່ຢ່າງໃດ.

4. ຫ້າມຊື້ - ຂາຍດິນໃຫ້ບໍລິສັດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ, ຖ້າພົບເຫັນຖືວ່າສະຫຼະສິດ ແລະ ຈະໄດ້ຍຶດເອົາທີ່ດິນດັ່ງກ່າວມາເປັນຂອງລັດ ພ້ອມທັງດຳເນີນຄະດີຕາມຂະບວນການຍຸຕິທຳຢ່າງເຂັ້ມງວດຕໍ່ພວກກ່ຽວ.

5. ທຸກໆເອກະສານທີ່ແຂວງ, ເມືອງ ແລະ ບ້ານໄດ້ອອກເອກະສານທີ່ຂັດກັບຄຳສັ່ງສະບັບນີ້ ທາງຄະນະຮັບຜິດຊອບຂັ້ນແຂວງ ຈະໄດ້ລົງໄປກວດກາຕົວຈິງ ແລະ ດຳເນີນຕາມລະບຽບກົດໝາຍ ( ຍົກເວັ້ນແຕ່ກໍລະນີທີ່ທາງການຈັດຕັ້ງໄດ້ຕົກລົງສະເພາະ ).

6. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

**ບ່ອນນຳສົ່ງ:**

- ພະແນກການອ້ອມຂ້າງແຂວງ ພາກສ່ວນລະ 1 ສະບັບ;
- ອົງການທຽບເທົ່າ ພາກສ່ວນລະ 1 ສະບັບ;
- ຫ້ອງວ່າການແຂວງ 1 ສະບັບ;
- ຫ້ອງວ່າການເມືອງໆລະ 1 ສະບັບ;
- ຫ້ອງການ ຊສ ເມືອງໆລະ 1 ສະບັບ;
- ເກັບຮັກສາໄວ້ 1 ສະບັບ.

ບົທ ວັນທອງ ກອງມະນີ